DEPARTMENT OF CHILDREN, YOUTH, AND FAMILIES

# ທ່ານມີສິດຮ້ອງຮຽນ

ຜູ້ໃຫ້ບໍລິການ TEFAP ນີ້ໃຫ້ຄໍາໝັ້ນສັນຍາທີ່ຈະຮັກສາສະພາບແວດລ້ອມທີ່ປາສະຈາກພຶດຕິກໍາການເລືອກປະຕິບັດ ແລະ ໃຫ້ໂອກາດເທົ່າທຽມກັນເພື່ອຈັດສະໜອງອາຫານໃຫ້ຜູ້ເຂົ້າຮ່ວມທຸກຄົນໂດຍບໍ່ຄໍານຶງເຖິງເຊື້ອຊາດ, ສີຜິວ, ຊາດກໍາເນີດ, ສາສະໜາ, ເພດ, ຄວາມພິການ, ອາຍຸ, ສະຖານະການແຕ່ງງານ, ສະຖານະຄອບຄົວ/ພໍ່ແມ່, ລາຍໄດ້ທີ່ໄດ້ມາຈາກໂຄງການຊ່ວຍເຫຼືອສາທາລະນະ, ຄວາມເຊື່ອດ້ານການເມືອງ ຫຼື ການແກ້ແຄ້ນ ຫຼື ການໂຕ້ຕອບສໍາລັບກິດຈະກໍາດ້ານສິດທິພົນລະເມືອງມາກ່ອນ.

ຜູ້ເຂົ້າຮ່ວມມີສິດຮ້ອງຮຽນເມື່ອພວກເຂົາເຊື່ອວ່າພວກເຂົາໄດ້ຮັບການປະຕິບັດຕໍ່ທີ່ບໍ່ເປັນທໍາ, ບໍ່ສົມເຫດສົມຜົນ ຫຼື ໃນຮູບແບບທີ່ປະກອບເປັນການເລືອກປະຕິບັດ ຫຼື ການລ່ວງລະເມີດ.  ມັນແມ່ນສິດຂອງທ່ານທີ່ຈະໄດ້ຮັບການຕອບຮັບທັນການໂດຍບໍ່ມີຄວາມຢ້ານກົວຕໍ່ການແກ້ແຄ້ນ ຫຼື ຜົນກະທົບໃນການເຂົ້າເຖິງອາຫານ. ຄໍາຮ້ອງຮຽນຂອງຜູ້ເຂົ້າຮ່ວມຈະຖືກແກ້ໄຂບໍ່ຊ້າໄປກວ່າ 30 ວັນເຮັດວຽກຫຼັງຈາກໄດ້ມີການຍື່ນຄໍາຮ້ອງຮຽນ.

**ບໍ່ມີວິທີທາງໃດທີ່ຜິດທີ່ຈະຍື່ນຄໍາຮ້ອງຮຽນ. ສາມາດຍື່ນຄໍາຮ້ອງຮຽນໄດ້ດ້ວຍວິທີທາງໃດໜຶ່ງຕໍ່ໄປນີ້:**

- Food Shelf/ຊື່ໂຄງການ:
- ທະນາຄານອາຫານ - ຊື່:
  - ທີ່ຢູ່ອີເມວ/ໂທລະສັບ:
- ສາຍດ່ວນຊ່ວຍເຫຼືອອາຫານມິນນີໂຊຕາ (MN Food HelpLine): 1-888-711-1151
- ແບບຟອມການຮ້ອງທຸກທາງອອນລາຍ
- MN DCYF OEO MNTEFAP.DCYF@state.mn.us
- ເຖິງຜູ້ຕາງໜ້າໃນທ້ອງຖິ່ນຂອງທ່ານ ແລະ/ຫຼື ລັດ
- ເຖິງ USDA

**ແບບຟອມການຮ້ອງຮຽນອອນ**

**ຖະແຫຼງການບໍ່ເລືອກປະຕິບັດຂອງ USDA**

ອີງຕາມກົດໝາຍວ່າດ້ວຍສິດທິພົນລະເມືອງຂອງລັດຖະບານກາງ ແລະ ກົດລະບຽບ ແລະ ນະໂຍບາຍວ່າດ້ວຍສິດທິພົນລະເມືອງຂອງກະຊວງກະເສດສະຫະລັດ (USDA), USDA, ໜ່ວຍງານ, ຫ້ອງການ ແລະ ພະນັກງານຂອງພວກເຂົາ ແລະ ສະຖາບັນເຂົ້າຮ່ວມ ຫຼື ບໍລິຫານໂຄງການ USDA ຖືກຫ້າມຈາກການເລືອກປະຕິບັດບົນພື້ນຖານເຊື້ອຊາດ, ສີຜິວ, ຊາດກໍາເນີດ, ສາສະໜາ, ເພດ, ຄວາມພິການ, ອາຍຸ, ສະຖານະການແຕ່ງງານ, ສະຖານະຄອບຄົວ/ພໍ່ແມ່, ລາຍໄດ້ທີ່ໄດ້ມາຈາກໂຄງການຊ່ວຍເຫຼືອສາທາລະນະ, ຄວາມເຊື່ອດ້ານການເມືອງ ຫຼື ການແກ້ແຄ້ນ ຫຼື ການໂຕ້ຕອບສໍາລັບກິດຈະກໍາດ້ານສິດທິພົນລະເມືອງມາກ່ອນ, ຢູ່ໃນໂຄງການ ຫຼື ກິດຈະກໍາໃດໜຶ່ງທີ່ໄດ້ດໍາເນີນການ ຫຼື ໄດ້ຮັບທຶນຈາກ USDA (ບໍ່ແມ່ນທຸກພື້ນຖານທີ່ຈໍານໍາໃຊ້ກັບທຸກໂຄງການ). ກໍານົດເວລາການແກ້ໄຂ ແລະ ການຍື່ນຄໍາຮ້ອງຮຽນແມ່ນແຕກຕ່າງກັນໄປຕາມແຕ່ລະໂຄງການ ຫຼື ເຫດການ.

ຄົນພິການຜູ້ທີ່ຕ້ອງໄດ້ມີການສື່ສານສໍາລັບຂໍ້ມູນໂຄງການດ້ວຍວິທີການອື່ນ (ຕົວຢ່າງ: ຕົວໜັງສືນູນ, ພິມເປັນຕົວໜັງສືໃຫຍ່, ເທັບບັນທຶກສຽງ, ພາສາມືອາເມຣິກັນ, ອື່ນໆ) ຄວນຈະຕ້ອງຕິດຕໍ່ກັບໜ່ວຍງານຂອງລັດ ຫຼື ທ້ອງຖິ່ນທີ່ບໍລິຫານໂຄງການ ຫຼື ຕິດຕໍ່ຫາ USDA ຜ່ານຝ່າຍບໍລິການໂທລະສັບທາງໄກຂອງລັດທີ່ເບີ 711 (ສຽງ ແລະ TTY). ນອກຈາກນັ້ນ, ຂໍ້ມູນໂຄງການແມ່ນອາດຈະມີໃຫ້ເປັນພາສາອື່ນນອກຈາກພາສາອັງກິດ.

ເພື່ອຍື່ນຄໍາຮ້ອງຮຽນຕໍ່ການເລືອກປະຕິບັດຂອງໂຄງການ, ໃຫ້ປະກອບແບບຟອມຄໍາຮ້ອງຮຽນການເລືອກປະຕິບັດຂອງໂຄງການ USDA, ແບບຟອມ AD-3027, ມີໃຫ້ທາງອອນລາຍຢູ່ທີ່ How to File a Program Discrimination Complaint (ວິທີຍື່ນຄໍາຮ້ອງຮຽນການເລືອກປະຕິບັດຂອງໂຄງການ) ແລະ ຢູ່ທີ່ຫ້ອງການ USDA ບ່ອນໃດບ່ອນໜຶ່ງ ຫຼື ຂຽນໜັງສືຈ່າໜ້າຊອງເຖິງ USDA ແລະ ປະກອບທຸກຂໍ້ມູນທີ່ຂໍຢູ່ໃນແບບຟອມໄວ້ໃນໜັງສືສະເໜີ. ເພື່ອຂໍສໍາເນົາແບບຟອມຮ້ອງຮຽນ, ໃຫ້ໂທຫາເບີ (866) 632-9992. ສົ່ງແບບຟອມ ຫຼື ໜັງສືທີ່ປະກອບຄົບຖ້ວນຂອງທ່ານໄປຫາ USDA ໂດຍ:

1. **ໄປສະນີ:**

   U.S. Department of Agriculture

   Office of the Assistant Secretary for Civil Rights

   1400 Independence Avenue, SW, Mail Stop 9410

   Washington, D.C. 20250-9410; ຫຼື
2. **ແຟັກ:** (202) 690-7442; ຫຼື
3. **ອີເມວ:** Program.Intake@usda.gov

ສະຖາບັນນີ້ເປັນຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ.